ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 76 /ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 18 MAR 2021

**ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**

**- ຫົວໜ່ວຍວິສາຫະກິດທີ່ມີລາຍຊື່ຕາມແຈ້ງການສະບັບນີ້**

**ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຕໍ່ ບັນດາຫົວໜ່ວຍວິສາຫະກິດ ທີ່ໄດ້ ໃບທະບຽນວິສາຫະກິດແລ້ວ ແຕ່ບໍ່ໄດ້ມາພົວພັນນຳຂະແໜງສ່ວຍສາອາກອນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີ ຂອງ ກົມສ່ວຍສາອາກອນ ເລກທີ 0456/ກສອ, ລົງວັນທີ 18 ກຸມພາ 2021.

ບົນພື້ນຖານ ໜັງສືສະເໜີ ເລກທີ 0456/ກສອ, ລົງວັນທີ 18 ກຸມພາ 2021 ຂອງ ກົມສ່ວຍສາອາກອນ, ກະຊວງການເງິນ ກ່ຽວກັບການພິຈາລະນາຕໍ່ ບັນດາຫົວໜ່ວຍວິສາຫະກິດ ທີ່ໄດ້ໃບທະບຽນວິສາຫະກິດແລ້ວ ແຕ່ບໍ່ໄດ້ມາພົວພັນນຳຂະແໜງສ່ວຍສາອາກອນ. ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດຈຳນວນ 709 ຫົວໜ່ວຍ ທີ່ມີລາຍຊື່ຄັດຕິດຕາມແຈ້ງການສະບັບນີ້ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເນື່ອງຈາກວ່າບໍ່ໄດ້ເຂົ້າໄປພົວພັນນຳເຈົ້າໜ້າທີ່ສ່ວຍສາອາກອນນັບແຕ່ວັນທີ່ໄດ້ຮັບໃບທະບຽນວິສາຫະກິດເປັນຕົ້ນມາ ປະກອບມີ:

- ຫົວໜ່ວຍທີ່ແຈ້ງຂຶ້ນທະບຽນວິສາຫະກິດ ແຕ່ວັນທີ 1 ສິງຫາ 2018 ຫາ ວັນທີ 31 ທັນວາ 2018 ມີ 27 ຫົວໜ່ວຍ;
- ຫົວໜ່ວຍທີ່ແຈ້ງຂຶ້ນທະບຽນວິສາຫະກິດ ແຕ່ວັນທີ 1 ມັງກອນ 2019 ຫາ ວັນທີ 31 ທັນວາ 2019 ມີ 357 ຫົວໜ່ວຍ;
- ຫົວໜ່ວຍທີ່ແຈ້ງຂຶ້ນທະບຽນວິສາຫະກິດ ແຕ່ວັນທີ 1 ມັງກອນ 2020 ຫາ ວັນທີ 31 ຕຸລາ 2020 ມີ 325 ຫົວໜ່ວຍ;

(ລາຍຊື່ວິສາຫະກິດທີ່ຖືກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວສາມາດກວດສອບເພີ່ມເຕີມທີ່ www.ned.moic.gov.la ຫຼື facebook: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື QR Code ທີ່ຄັດຕິດແຈ້ງການສະບັບນີ້)

สแกนด้วย CamScanner

2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີລາຍລະອຽດດັ່ງນີ້:

2.1 ຕ້ອງເຂົ້າໄປພົວພັນນຳ ເຈົ້າໜ້າທີ່ສ່ວຍສາອາກອນ, ຂະແໜງການເງິນ ເພື່ອປະກອບເອກະສານແຈ້ງ ເສຍອາກອນໃຫ້ສຳເລັດ. ແລ້ວນຳເອົາໜັງສືຢັ້ງຢືນການການພົວພັນດັ່ງກ່າວມາແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;

2.2 ຫ້າມເຄື່ອນໄຫວທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເກັບຮັກສາໄວ້;

3. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີຜົນປະຕິບັດ 60 ວັນ ນັບແຕ່ວັນທີ 19 ມີນາ 2021 ຫາ ວັນທີ 19 ພຶດສະພາ 2021. ໃນກໍລະນີ ບໍ່ສາມາດປະຕິບັດໄດ້ຕາມກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ທະບຽນວິສາຫະກິດຈະອອກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ;

4. ຖ້າລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການ ຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ;

ແຈ້ງມາຍັງທ່ານເພື່ອຊາບ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ກະຊວງອຸດສາຫະກຳ ແລະ ການຄ້າ
ເຈົ້າໜ້າທີ່
ທະບຽນວິສາຫະກິດ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ທ. ຈຽງຄຳ ທອງປະເສີດ
Mrs Chiengkham THONGPASEUTH

ບ່ອນສົ່ງ

- ກົມສ່ວຍສາອາກອນ (ກະຊວງການເງິນ) 1 ສະບັບ;
- ວິສາຫະກິດທີ່ຖືກໂຈະຊົ່ວຄາວ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ 1 ສະບັບ;
- ສຳເນົາ 1 ສະບັບ.

QR Code ກວດຊື່ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ

สแกนด้วย CamScanner
สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

ເລກທີ 0456/ກສອ

ນະຄອນຫຼວງວຽງຈັນ, ວັນທີ 18 FEB 2021

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຂາເຂົ້າ ເລກທີ 0526
ວັນທີ 24.02.2021

# ໜັງສືສະເໜີ

ຮຽນ : ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເຈົ້າໜ້າທີ່ທະບຽນວິສາຫະກິດ;

ເລື່ອງ: ພິຈາລະນາຕໍ່ຫົວໜ່ວຍວິສາຫະກິດທີ່ໄດ້ໃບທະບຽນແລ້ວແຕ່ບໍ່ໄດ້ມາພົວພັນນຳຂະແໜງສ່ວຍສາອາກອນ,

- ອີງຕາມ ແຈ້ງການເລື່ອງການອອກເລກປະຈຳຕົວຜູ້ເສຍອາກອນ (TIN) ສະບັບເລກທີ 0489/ຫກງ, ລົງວັນທີ 05 ມີນາ 219;
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 04 ກັນຍາ 2019, ໃນການປຶກສາຫາລືລະຫວ່າງກົມສ່ວຍສາອາກອນ ແລະ ກົມຄຸ້ມຄອງວິສາຫະກິດ;
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 09 ກັນຍາ 2020, ໃນການປຶກສາຫາລືລະຫວ່າງກົມສ່ວຍສາອາກອນ ແລະ ກົມຄຸ້ມຄອງວິສາຫະກິດ.

ກົມສ່ວຍສາອາກອນ ຂໍລາຍງານຄືນສຳລັບຫົວໜ່ວຍທຸລະກິດທີ່ໄດ້ໃບທະບຽນວິສາຫະກິດແລ້ວ ພາຍໃນ 90 ວັນ ແຕ່ບໍ່ທັນໄດ້ເຂົ້າມາພົບເຈົ້າໜ້າທີ່ສ່ວຍສາອາກອນ ເຊິ່ງມີບັນຊີຕາມລາຍຊື່ດັ່ງລຸ່ມນີ້ເພື່ອລາຍງານຄືນໃຫ້ກົມທະບຽນ ແລະ ຄຸ້ມຄອງວິຫະກິດ ເຈົ້າໜ້າທີ່ທະບຽນວິສາຫະກິດເພື່ອປະຕິບັດຕາມລະບຽບການ.

ຫົວໜ່ວຍທີ່ຄ້າງໃນລະບົບແຕ່ວັນທີ 01/08/2018-31/12/2018 ມີ 27 ຫົວໜ່ວຍ
ຫົວໜ່ວຍທີ່ຄ້າງໃນລະບົບແຕ່ວັນທີ 01/01/2019-31/12/2019 ມີ 357 ຫົວໜ່ວຍ
ຫົວໜ່ວຍທີ່ຄ້າງໃນລະບົບແຕ່ວັນທີ 01/01/2020-31/10/2020 ມີ 325 ຫົວໜ່ວຍ
ລວມທັງໝົດ 709 ຫົວໜ່ວຍ

ລາຍລະອຽດຂອງແຕ່ລະປີ ມີດັ່ງນີ້:

1. ຫົວໜ່ວຍທີ່ຄ້າງໃນລະບົບແຕ່ວັນທີ 01/08/2018-31/12/2018 ມີ 27 ຫົວໜ່ວຍ

| ລ/ດ | ວັນທີ | ເລກປະຈຳຕົວຜູ່ເສຍອາກອນ | ຊື່ວິສາຫະກິດ | ສະຖານທີ່ຕັ້ງ | ເບີໂທລະສັບ | ຊື່ ແລະ ນາມສະກຸນ | ສະຖານະການຂໍ | ວັນທີຢືນຢັນ |
|---|---|---|---|---|---|---|---|---|
| 1 | 21/12/2018 | 075748276000 | ບໍລິສັດ ເອັສ ທີ ອາ ໂຮນດິ້ງ ຈຳກັດຜູ້ດຽວ | ໂພນທັນ, ໄຊເສດຖາ, ນະຄອນຫຼວງວຽງຈັນ | 020 96666666 | ພຸດທະສິນ ໃສທິລາດ 21881 | ຢືນຢັນ ERC | ຍັງບໍ່ທັນໄດ້ຮັບຮອງ |
| 2 | 19/12/2018 | 244073552000 | ບໍລິສັດ ວິລັງ ການຄ້າ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ | ວັດໄຕນ້ອຍທົ່ງ, ສີໂຄດຕະບອງ, ນະຄອນຫຼວງວຽງຈັນ | 23005888 | ZENG GONGWEN 21865 | ຢືນຢັນ ERC | ຍັງບໍ່ທັນໄດ້ຮັບຮອງ |

(1)

สแกนด้วย CamScanner

| | | | | | | | | |
|---|---|---|---|---|---|---|---|---|
| 325 | 03/01/2020 | 672200761000 | ບໍລິສັດ ຣວາງເຈີນວັດສະດຸກໍ່ສ້າງ ຈຳກັດຜູ້ດຽວ | ວັດໄຕນ້ອຍທົ່ງ, ສີໂຄດຕະບອງ, ນະຄອນຫຼວງວຽງຈັນ | 020 54636666 | HUANG ZHEN 23599 | ຢືນຢັນ ERC | ຍັງບໍ່ທັນໄດ້ຮັບຮອງ |

ສຳລັບຈຳນວນຫົວໜ່ວຍວິສາຫະກິດທີ່ມີລາຍຊື່ຂ້າງເທິງນັ້ນ ແມ່ນບໍ່ໄດ້ມາພົວພັນ ນຳກົມສ່ວຍສາອາກອນຕາມສະໂນດນຳສົ່ງຂອງ ກົມທະບຽນ ກະຊວງອຸດສາຫະກຳ ແລະ ການຄ້າ ນັບແຕ່ມື້ໄດ້ໃບທະບຽນວິສາຫະກິດເປັນຕົ້ນມາ, ສະນັ້ນສະເໜີທ່ານໃຊ້ມາດຕະການໂຈະການເຄື່ອນໄຫວທຸລະກິດ ຕໍ່ວິສາຫະກິດດັ່ງກ່າວ

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາເຫັນສົມຄວນດ້ວຍ.

ຫົວໜ້າກົມສ່ວຍສາອາກອນ

ທ່ານມະລິດ ຣາຊະພົນ

สแกนด้วย CamScanner
สแกนด้วย CamScanner